

# WOMEN OF INDUSTRY

## Weaving for life

TEXT BY **JEETENDRA MARCELLINE**
PHOTOGRAPHS BY **PHOONSAB THEVONGSA & SOUKSAMLAN LALADETH**

Miles from nowhere, in remote Laos, grandmothers, mothers, daughters, sisters, and wives forage, grow, and prepare natural cotton, hemp, jungle vine, and silk yarn for weaving at the Marcelline & San (M&S) "Fabric for Life" looms in Vientiane and Vang Vieng. These skilled women are part of the M&S initiatives commenced with the objective of preserving age-old traditions and developing a cottage industry in Laos' unique handwoven fabric sector.

M&S is the handwoven fabric business of Lanjan Holdings Sole Company Limited, founded in 2016 by Sri Lankan-born Laos resident Jeetendra Marcelline. Jeetendra's passion for weaving heritage began on his first visit to Laos in 2013. During extensive travels in the mountainous northern regions, he was mesmerized by the weaving skills in traditional villages.

The beauty, durability, and malleability of natural fibers set alight Jeetendra's creativity and he was inspired to design fabric comprised of only natural yarn and natural dyes. Observing life and patterns in Mekong lands, India, Sri Lanka, Japan, Egypt, Persia, Europe, and North America, particularly from the ancient world and modern romantic era, and from cricket, M&S created the collections Saeng, Whiter Shade of Pale, Palanquin, Mae Nam Kong, Vieng Chan, and Savan.


1

***left:*** Yom threading innovation
**1.** Restored and renovated Hor Tamhuk, heritage for life
**2.** Vieng Chan, window to Mekong lands
**3.** Silk rice


2


3

Women are at the heart of the weaving tradition. Since its inception, the team has traveled extensively to remote areas and learned of the constraints and challenges facing the weavers. Together with the villagers, the team commenced programs to ensure supply and build capacity. In doing so, M&S eliminated the technical, financial, and commercial risks that growers and weavers typically face, and household income was supplemented.

The M&S Outgrower programs in Luang Prabang and Houaphan support partners with up-front working capital and purchase of all yarn produced at a pre-agreed price. The M&S Home Weaver program was designed with the objective of providing weavers looms, yarn, and training to work at home, with the freedom to attend to their day-to-day responsibilities. To ensure quality, the process is supported by video calls and regular visits.

M&S incentivizes staff to grow professionally and personally. All of the team are provided with opportunities to develop their craft, learn foreign languages, and innovate. Regular study tours to heritage sites are aimed at learning about weaving heritage and improving design.

Facilities are developed after consultation. The site of the looms, Hor Tamhuk, was chosen considering travel distance, ensuring that journeys are less than thirty minutes from home to work.

Fabric is craft, symbolism, creed, tradition, persona, and identity. "Protecting nature, ›

culture, and tradition are key drivers in our activities. Our weaves depict the tangible and intangible heritage of Laos, its intellectual property, and our common human heritage," says Yom, Head Weaver at M&S. These underlying values are imbued in the team, with passion and pride prerequisites at every stage.

For every type of use, a suitable and affordable texture could be woven, which is part of the ethos. The modus operandi focuses on the empirical patterns with the correct mix of natural yarn and technique, allowing for innovation, adaptation, and scalability to meet bespoke customer needs.

Every texture and motif has been developed over many years with careful research. Tests at international laboratories are carried out at various times during the entire process to ensure that all yarn, tear strength, and shrinkage meet or exceed industry standards.

A seamless value chain design, planting, procuring, preparing, spinning, weaving, and finishing is based on prudent organization at every step, coupled with in-parallel guidance and supervision. Yom, the Head Weaver, supported by Jeetendra, is involved at every stage. Experienced eyes, binary minds, and dexterous hands produce rolls of fabric that meet the desired quality, durability, and style.

M&S' vision is couched firmly in the precept that in order to survive and grow, creating a cottage industry, with efficient supply and economies of scale, is vital. Securing raw materials on a regular basis together with in-time production is critical for building a competitive business, meeting timelines, and riding the cycles of international markets.

Demography and lifestyle changes threaten the weaving heritage. As Laos rapidly transforms from land-locked to land-linked, the sector faces changes caused by increased trade, including cheaper synthetic yarns and textiles, rising freight costs, wage inflation, and competition from better-organized economies. As the young seek more lucrative job opportunities in Laos and the region, the baton is not being passed to the next generation.

Lessons "learned by doing" are many. Jeetendra shares "There is much to do for weaving to survive and grow. The overriding aim should be to grow Laos' weaving sector by encouraging long-term investment and support for all stakeholders in the fledgling years. Fiscal incentives, such as access to finance for training and working capital, are some policy measures that would help enormously. Registering trademarks and securing geographical intellectual property certification would enhance the Made in Laos brand, protect natural competitive advantages, and garner higher value for handwoven fabric. Ethical and accurate labeling would build trust in domestic and international markets and showcase authenticity. Exemption from certain taxes and duties would help relieve some of the budgetary constraints and free up working capital for all weaving businesses, and in turn, allow them to support weavers and growers at a grassroots level."

A Lao proverb notes, "Before you walk, you must crawl." M&S has crawled through many challenges since its inception. Today, against the backdrop of the magical sound of looms at Hor Tamhuk and in the villages, with the collective experience of its staff and partners, including over 30 women, M&S is positioned for expansion, supporting the livelihoods of all stakeholders, and championing the incomparable weaving heritage of Laos. ■


2

**1.** Spinning magic
**2.** Hand maidens Noy, Yom, Phou Phimjai, and Nuy
**3.** Writes of passage
**4.** Tai Leu cotton fields


1





4



3

MORE INFO
For more information on Marcelline & San products, visit lanjanholdings.com



# ແມ່ຍິງຕົ້ນແບບ ແຫ່ງອຸດສະຫະກຳ



1

## ຕໍ່າແຜ່ນແພເພື່ອຫາລ້ຽງຊີບ

ແປ ແລະ ຮຽບຮຽງໂດຍ ໄພບູນ ທະມະບົວສີ
ຮູບໂດຍ ພູມຊັບ ເທວົງສາ & ສຸກສຳລານ ລາລາເດດ

**ດ້ານເທິງ**: ແມ່ຍິງເຮັດຜ້າແພ ສ້າງເຮືອນມີສຸກ
**1.** ຜ້າແບບ ແມ່ນ້ຳຂອງ ສີຂອງນ້ຳ
**2.** ຜ້າແບບ ນ້ຳຕົກ
**3.** ນາງພູຕໍ່າຜ້າດ້ວຍມື

**ຂໍ້ມູນເພີ່ມເຕີມ**
ສາມາດເບິ່ງຂໍ້ມູນເພີ່ມເຕີມ ກ່ຽວກັບຜະລິດຕະພັນຂອງ Marcelline & San ໄດ້ທີ່ lanjanholdings.com

ໃນໝູ່ບ້ານຫຼາຍແຫ່ງທີ່ຕັ້ງຢູ່ຫ່າງໄກສອກຫຼີກຂອງປະເທດລາວ, ຍັງມີກຸ່ມແມ່ຍິງ ເຊິ່ງກໍແມ່ນແມ່ເຖົ້າ, ແມ່, ລູກສາວ, ເອື້ອຍ-ນ້ອງສາວ, ແລະ ເມຍ ທີ່ເປັນຜູ້ຊອກຫາ, ປູກ ແລະ ກະກຽມຝ້າຍທຳມະຊາດ, ປ່ານ, ປໍສາ ແລະ ເສັ້ນຝ້າຍ/ໄໝ ສຳລັບໃຊ້ເຂົ້າໃນການຕໍ່າຫູກທີ່ບໍລິສັດ Marcelline & San (M&S) ພາຍໃຕ້ "Fabric for Life" ເຊິ່ງເປັນເຮືອນຕໍ່າຫູກໃນວຽງຈັນ ແລະ ວັງວຽງ. ກຸ່ມແມ່ຍິງທີ່ມີສີມືດ້ານການຕໍ່າຫູກເຫຼົ່ານີ້ ຖືເປັນສ່ວນໜຶ່ງຂອງແນວຄິດລິເລີ່ມໂຄງການ M&S ທີ່ເລີ່ມຕົ້ນດຳເນີນງານເພື່ອຈຸດປະສົງໃນການປົກປັກຮັກສາປະເພນີອັນເກົ່າແກ່ ແລະ ເພື່ອເປັນການພັດທະນາອຸດສາຫະກຳຫັດຖະກຳ ໃນຂະແໜງການຕໍ່າຫູກທີ່ເປັນເອກະລັກຂອງລາວ.

M&S ເປັນທຸລະກິດຜ້າແພທີ່ຕໍ່າດ້ວຍມື ຂອງບໍລິສັດ ລັນຈານ ໂຮນດິ້ງ ໂຊລ ຈຳກັດ (Lanjan Holdings Sole), ສ້າງຕັ້ງຂຶ້ນໃນປີ 2016 ໂດຍທ່ານ Jeetendra Marcelline ເຊິ່ງເປັນຄົນລາວທີ່ກຳເນີດໃນສີລັງກາ. ຄວາມຫຼົງໄຫຼໃນມໍລະດົກການຕໍ່າຫູກຂອງທ່ານ Jeetendra ເລີ່ມຕົ້ນມາຈາກການເດີນທາງມາຢ້ຽມຢາມປະເທດລາວຄັ້ງທຳອິດໃນປີ 2013. ໃນໄລຍະທີ່ມີການເດີນທາງໄປຫຼາຍພື້ນທີ່ໃນເຂດພູດອຍທາງພາກເໜືອ, ເພິ່ນກໍເກີດມີຄວາມຮູ້ສຶກເພິ່ງພໍໃຈກັບສີມືການຕໍ່າຫູກຂອງປະຊາຊົນໃນບັນດາບ້ານດັ້ງເດີມຫຼາຍແຫ່ງ.

ຄວາມງົດງາມ, ຄວາມໝຽວໝັ້ນທົນທານ ແລະ ຄວາມອ່ອນຕົວຂອງເສັ້ນຝ້າຍ/ໄໝທຳມະຊາດ ໄດ້ຈຸດປະກາຍຄວາມຄິດສ້າງສັນແກ່ທ່ານ Jeetendra ບວກກັບການໄດ້ຮັບແຮງບັນດານໃຈໃນການອອກແບບແຜ່ນແພ ທີ່ນຳໃຊ້ເສັ້ນຝ້າຍທຳມະຊາດປະສົມກັບສີຍ້ອມແບບທຳມະຊາດ. ຜ່ານການສັງເກດວິຖີຊີວິດ ແລະ ຮູບແບບການດຳລົງຊີວິດໃນປະເທດລຸ່ມແມ່ນ້ຳຂອງ, ລວມທັງອິນເດຍ, ສີລັງກາ, ຍີ່ປຸ່ນ, ອີຢິບ, ເປີເຊຍ, ເອີຣົບ ແລະ ອາເມລິກາເໜືອ ໂດຍສະເພາະກໍແມ່ນຈາກໂລກບູຮານ ແລະ ຍຸກຈິດຕະນິຍົມສະໄໝໃໝ່ ແລະ ຈາກຄຣິກເກັດ, ທາງບໍລິສັດ M&S ຈຶ່ງໄດ້ສ້າງສັນຄໍເລັກຊັ່ນແສງ, ໄວເທີ ເສດ ອອຟເພລ (ສີຂາວຈົນຊີດ), ປາລັງຄວິນ, ແມ່ນ້ຳຂອງ, ວຽງຈັນ ແລະ ສະຫວັນ.

ແມ່ຍິງຖືເປັນຫົວໃຈສຳຄັນຂອງປະເພນີການຕໍ່າຫູກ. ນັບແຕ່ມື້ສ້າງຕັ້ງບໍລິສັດ, ທາງທີມງານກໍໄດ້ເດີນທາງໄປ

ຍັງເຂດຫ່າງໄກສອກຫຼີກໃນຫຼາຍແຫ່ງ ແລະ ໄດ້ຮຽນຮູ້ເຖິງຂໍ້ຈໍາກັດ ແລະ ຄວາມທ້າທາຍທີ່ຊ່າງຕໍ່າຫູກໄດ້ປະເຊີນ. ທາງທີມງານຮ່ວມກັບຊາວບ້ານ ໄດ້ເລີ່ມຕົ້ນດໍາເນີນໂຄງການ ເພື່ອຮັບປະກັນການຕອບສະໜອງ ແລະ ການສ້າງຄວາມອາດສາມາດ. ໃນການດໍາເນີນການນັ້ນ, ບໍລິສັດ M&S ໄດ້ກໍາຈັດບັນຫາຄວາມສ່ຽງດ້ານເຕັກນິກ, ການເງິນ ແລະ ການຄ້າ ທີ່ຜູ້ປູກຝ້າຍ ແລະ ຜູ້ຕໍ່າຫູກມັກປະເຊີນ ທັງຊ່ວຍເສີມສ້າງລາຍຮັບແກ່ຄົວເຮືອນ.

ໂຄງການການຜະລິດຕາມສັນຍາຂອງ M&S ໃນຫຼວງພະບາງ ແລະ ຫົວພັນ ໄດ້ຊ່ວຍສະໜັບສະໜູນຄູ່ຮ່ວມງານໃນດ້ານເງິນທຶນໝູນວຽນລ່ວງໜ້າ ແລະ ການຮັບຊື້ເສັ້ນຝ້າຍທັງໝົດໃນລາຄາທີ່ໄດ້ຕົກລົງກັນໄວ້. ໂຄງການເຮືອນຕໍ່າຫູກຂອງ M&S ໄດ້ຮັບການອອກແບບ ໂດຍມີຈຸດປະສົງ ເພື່ອຈັດຊື້ກີ່ຕໍ່າຫູກ, ເສັ້ນຝ້າຍ, ແລະ ການຝຶກແອບຕໍ່າຫູກຢູ່ເຮືອນ ເຊິ່ງມີອິດສະຫຼະໃນການເຮັດວຽກໃນແຕ່ລະວັນ. ເພື່ອຮັບປະກັນດ້ານຄຸນນະພາບ, ຂະບວນການນີ້ໄດ້ຮັບການຊ່ວຍເຫຼືອໂດຍການສາທິດທາງວິດີໂອຄໍ ແລະ ການລົງຢ້ຽມຢາມເປັນປະຈໍາ.

M&S ໄດ້ສ້າງແຮງຈູງໃຈແກ່ພະນັກງານຂອງຕົນ ໃຫ້ມີຄວາມເຕີບໃຫຍ່ຂະຫຍາຍຕົວທັງສາຍອາຊີບ ແລະ ຊີວິດສ່ວນຕົວ. ທີມງານທຸກຄົນ ລ້ວນແຕ່ໄດ້ຮັບໂອກາດໃນການພັດທະນາຝີມື, ຮຽນຮູ້ພາສາຕ່າງປະເທດ, ແລະ ສ້າງສັນສິ່ງໃໝ່ໆ. ມີການທັດສະນະສຶກສາໃນເຂດທີ່ເປັນແຫຼ່ງມໍລະດົກເປັນປະຈໍາ ເພື່ອຮຽນຮູ້ກ່ຽວກັບມໍລະດົກການຕໍ່າຫູກ ແລະ ປັບປຸງການອອກແບບ.

ສິ່ງອໍານວຍຄວາມສະດວກຕ່າງໆ ໄດ້ຮັບການພັດທະນາພາຍຫຼັງມີການປຶກສາຫາລືກັນ ໂດຍໄດ້ເລືອກເອົາຫໍຕໍາຮັກ ເປັນສະຖານທີ່ຕໍ່າຫູກ ໂດຍຄໍານຶງເຖິງໄລຍະທາງສໍາລັບການທ່ຽວໄປວຽກ ເພື່ອຮັບປະກັນເວລາທີ່ໃຊ້ໃນການເດີນທາງໄປຍັງບ່ອນເຮັດວຽກບໍ່ເກີນສາມສິບນາທີ.


2


3

ຜ້າແພປຽບເໝືອນງານປະດິດ, ທັງເປັນສັນຍະລັກ, ຄວາມເຊື່ອ, ປະເພນີ, ຄວາມເປັນຕົວຕົນ ແລະ ເອກະລັກ. ທ່ານ Jeetendra ໄດ້ກ່າວວ່າ: "ການປົກປັກຮັກສາທໍາມະຊາດ, ວັດທະນະທໍາ ແລະ ຮີດຄອງປະເພນີ ຖືເປັນແຮງກະຕຸ້ນທີ່ສໍາຄັນໃນການດໍາເນີນກິດຈະກໍາຂອງພວກເຮົາ. ຜ້າແພທີ່ຕໍ່າດ້ວຍມືຂອງພວກເຮົາ ຍັງສື່ເຖິງມູນມັງທີ່ເປັນຮູບປະທໍາ ແລະ ນາມມະທໍາຂອງປະເທດລາວ, ມັນເປັນຊັບສິນທາງປັນຍາ ແລະ ມູນມໍລະດົກທີ່ມະນຸດມີຮ່ວມກັນ". ຄ່ານິຍົມທີ່ເຊື່ອງຊ້ອນເຫຼົ່ານີ້ໄດ້ຖືກປູກຝັງໄວ້ກັບທີມງານ ໂດຍມີຂໍ້ກໍານົດເບື້ອງຕົ້ນກ່ຽວກັບຄວາມຫຼົງໄຫຼ ແລະ ຄວາມພາກພູມໃຈກັບຜົນງານໃນທຸກຂັ້ນຕອນ.

ເພື່ອຕອບສະໜອງຕໍ່ການການຊົມໃຊ້ທຸກປະເພດ, ສາມາດຕໍ່າລວດລາຍທີ່ເໝາະສົມ ທັງລາຄາບໍ່ແພງໄດ້ ເຊິ່ງເປັນສ່ວນໜຶ່ງຂອງຫຼັກຈັນຍາບັນການດໍາເນີນທຸລະກິດ. ວິທີການປະດິດ ແມ່ນໄດ້ມຸ່ງເນັ້ນໃສ່ຮູບແບບທີ່ຊັດເຈນ ດ້ວຍການປະສົມປະສານເສັ້ນຝ້າຍ/ໄໝທໍາມະຊາດ ແລະ ນໍາໃຊ້ເຕັກນິກທີ່ຖືກຕ້ອງ ເຮັດໃຫ້ເກີດເປັນນະວັດຕະກໍາ, ການປັບຕົວ ແລະ ຄວາມສາມາດໃນການຂະຫຍາຍຂະໜາດ ເພື່ອຕອບສະໜອງຕາມຄວາມຕ້ອງການຂອງລູກຄ້າ.

ພື້ນຜິວ ແລະ ລວດລາຍທັງໝົດ ໄດ້ຮັບການພັດທະນາປັບປຸງເປັນເວລາຫຼາຍປີ ດ້ວຍການສຶກສາຢ່າງພິຖີພິຖັນ. ການທົດສອບທີ່ຫ້ອງທົດລອງສາກົນ ຈະດໍາເນີນການໃນຫຼາຍໆຄັ້ງ ໃນຂະບວນການທັງໝົດນີ້ ເພື່ອຮັບປະກັນວ່າ ຄວາມທົນທານຕໍ່ການຈີກຂາດ ແລະ ການຫົດຕົວທັງໝົດຂອງເສັ້ນຝ້າຍ/ໄໝນັ້ນ ກົງກັບເກນມາດຕະຖານ ຫຼື ເກີນມາດຕະຖານທາງອຸດສາຫະກໍາ ຫຼື ບໍ່.

ການອອກແບບ, ການປູກຝ້າຍ, ການຈັດຊື້, ການກະກຽມ, ການປັ່ນຝ້າຍ (ເຂັນຝ້າຍ), ການຕໍ່າຜ້າ ແລະ ການຕົກແຕ່ງຕ່ອງ ໂສ້ຄຸນຄ່າອັນລະອຽດອ່ອນນັ້ນ ຂຶ້ນຢູ່ກັບການຈັດການແບບຮັດກຸມໃນທຸກຂັ້ນຕອນ, ຄຽງຄູ່ກັບການໃຫ້ຄໍາແນະນໍາ ແລະ ການຕິດຕາມຄຸ້ມຄອງຢ່າງໃກ້ຊິດ. ນາງ ຍົມ, ຫົວໜ້າຊ່າງຕໍ່າຫູກ ທີ່ໄດ້ຮັບການສະໜັບສະໜູນຈາກທ່ານ Jeetendra ໄດ້ມີສ່ວນຮ່ວມໃນຂະບວນການນີ້ທຸກຂັ້ນຕອນ. ການທີ່ມີສາຍຕາຄ່ອງແຄ້ວ, ຈິດໃຈທຸ່ນທ່ຽງ ແລະ ສອງມືທີ່ວ່ອງໄວ ຈະສາມາດຜະລິດຜືນຜ້າໄດ້ຕົງຕາມຄຸນນະພາບ ທັງມີຄວາມທົນທານ ແລະ ມີສະໄຕລ໌ທີ່ຕ້ອງການ.

ວິໄສທັດຂອງ M&S ໄດ້ຍຶດໝັ້ນໃນຫຼັກການທີ່ວ່າ ເພື່ອຄວາມຢູ່ລອດ ແລະ ການເຕີບໂຕ, ການສ້າງອຸດສາຫະກຳຄົວເຮືອນ ດ້ວຍການສະໜອງປະສິດທິພາບ ແລະ ການປະຢັດຕໍ່ຂະໜາດຖືເປັນສິ່ງສຳຄັນ. ການຮັບປະກັນການສະໜອງວັດຖຸດິບຢ່າງສະໝໍ່າສະເໝີ ຄຽງຄູ່ກັບການຜະລິດທີ່ທັນກັບເວລາ ແມ່ນມີຄວາມສຳຄັນຕໍ່ການສ້າງທຸລະກິດທີ່ມີການແຂ່ງຂັນ, ມີກຳນົດເວລາ, ແລະ ຂັບເຄື່ອນຕາມວົງຈອນຂອງຕະຫຼາດສາກົນ.

ການປ່ຽນແປງດ້ານປະຊາກອນສາດ ແລະ ວິຖີການດຳລົງຊີວິດ ຖືເປັນໄພຄຸກຄາມຕໍ່ມໍລະດົກຜ້າແພທີ່ຕໍ່າດ້ວຍມື. ໃນຂະນະທີ່ປະເທດລາວ ກໍມີການປ່ຽນແປງຢ່າງວ່ອງໄວຈາກປະເທດທີ່ບໍ່ມີທາງອອກສູ່ທະເລເປັນປະເທດທີ່ເປັນສູນກາງການເຊື່ອມໂຍງໃນອະນຸພາກພື້ນ, ເຊິ່ງຂະແໜງການຕ່າງໆຕ້ອງໄດ້ປະເຊີນໜ້າກັບການປ່ຽນແປງ ທີ່ເກີດຈາກການເພີ່ມຂຶ້ນທາງດ້ານການຄ້າ, ລວມທັງເສັ້ນຝ້າຍ/ໄໝ ແລະ ຜ້າແພສັງເຄາະທີ່ມີລາຄາຖືກລົງ, ຄ່າຂົນສົ່ງທີ່ເພີ່ມຂຶ້ນ, ອັດຕາເງິນເຟີ້ຕາມຄ່າຈ້າງ, ແລະການແຂ່ງຂັນຈາກທຸລະກິດທີ່ມີການຈັດການທີ່ດີຂຶ້ນ. ເນື່ອງຈາກຄົນຮຸ່ນໃໝ່ ໄດ້ສະແຫວງຫາໂອກາດໃນການຊອກເຮັດວຽກທີ່ມີລາຍຮັບຫຼາຍຂຶ້ນ ທັງໃນລາວ ແລະ ພາກພື້ນ, ກະສວຍຕໍ່າຫູກຈຶ່ງບໍ່ໄດ້ຮັບການຖ່າຍທອດໄປສູ່ຄົນລຸ້ນຫຼັງໄດ້.

ບົດຮຽນທີ່ໄດ້ຮັບຜ່ານ "ຮຽນຮູ້ຈາກການກະທຳ" ແມ່ນມີຫຼາຍຊ່ອງທາງ. ທ່ານ Jeetendra ໄດ້ແບ່ງປັນໃຫ້ຮູ້ຕື່ມວ່າ "ການຕໍ່າຜ້າເພື່ອຄວາມຢູ່ລອດ ແລະ ການເຕີບໂຕນັ້ນມີຫຼາຍສິ່ງຢ່າງທີ່ຕ້ອງໄດ້ລົງມືເຮັດ. ເປົ້າໝາຍສຳຄັນ ຄວນຈະເປັນການເສີມຂະຫຍາຍຂະແໜງການຕໍ່າຫູກຂອງລາວໂດຍໃຫ້ການສະໜັບສະໜູນການລົງທຶນໄລຍະຍາວ ແລະ ສະໜັບສະໜູນຄູ່ຮ່ວມງານທັງໝົດ ໃນຊ່ວງປີຂອງການເລີ່ມຕົ້ນກໍ່ຕັ້ງ. ສິ່ງຈູງໃຈທາງການເງິນ ເຊັ່ນ: ການເຂົ້າເຖິງ



1. ນາງ ນ້ອຍ ກຳລັງຕໍ່າຫູກ
2. ຫູກຢູ່ສູນນີ້ບໍ່ທຳມະດາ
3. ເສັ້ນຝ້າຍຄືຄວາມຊົງຈຳ
4. ຈາກປ່າດົງສູ່ຜ້າແພ







3

ທຶນ ເພື່ອການຝຶກອົບຮົມ ແລະ ທຶນໝູນວຽນ ຖືເປັນມາດຕະການທາງນະໂຍບາຍບາງຢ່າງ ທີ່ຈະສາມາດຊ່ວຍໄດ້ຢ່າງຫຼວງຫຼາຍ. ການຈົດທະບຽນເຄື່ອງໝາຍການຄ້າ ແລະ ການຢັ້ງຢືນຊັບສິນທາງປັນຍາ ທີ່ເປັນຕົວບົ່ງຊີ້ທາງພູມສາດ ຈະຊ່ວຍເພີ່ມເຄື່ອງໝາຍການຄ້າ "Made in Laos" ໄດ້ ເຊິ່ງຈະຊ່ວຍປົກປ້ອງຄວາມໄດ້ປຽບໃນການແຂ່ງຂັນຕາມທຳມະຊາດ, ແລະ ສ້າງມູນຄ່າຂອງຜ້າແພທີ່ຕ່ຳດ້ວຍມືໄດ້ສູງຂຶ້ນ. ການຕິດສະຫຼາກແບບມີຈັນຍາບັນ ແລະ ຖືກຕ້ອງ ຈະສ້າງຄວາມໄວ້ເນື້ອເຊື່ອໃຈທັງໃນຕະຫຼາດພາຍໃນ ແລະ ຕ່າງປະເທດ ແລະ ຍັງສະແດງໃຫ້ເຫັນເຖິງຄວາມຖືກຕ້ອງຢ່າງແທ້ຈິງ. ການຍົກເວັ້ນພາສີ ແລະ ອາກອນບາງລາຍການ ຈະຊ່ວຍຫຼຸດຜ່ອນຂໍ້ຈຳກັດດ້ານງົບປະມານ ແລະ ເພີ່ມເງິນທຶນໝູນວຽນໃຫ້ແກ່ທຸລະກິດຕ່ຳຫູກທຸກລາຍ, ພ້ອມກັນນັ້ນຍັງຈະຊ່ວຍໃຫ້ພວກເຂົາສາມາດສະໜັບສະໜູນຜູ້ຕ່ຳຫູກ ແລະ ຜູ້ປູກຝ້າຍໃນລະດັບຮາກຖານໄດ້."

ສຸພາສິດລາວບົດໜຶ່ງກ່າວໄວ້ວ່າ "ອົດສົ້ມຈຶ່ງໄດ້ກິນຫວານ ອົດທົນທານວຽກງານຈຶ່ງແລ້ວ" ເຊິ່ງບໍລິສັດ M&S ໄດ້ກ້າວຜ່ານສິ່ງທ້າທາຍຫຼາຍຢ່າງນັບແຕ່ມື້ເລີ່ມຕົ້ນດຳເນີນທຸລະກິດ. ປັດຈຸບັນ, ບໍລິສັດ M&S ຢູ່ໃນຊ່ວງທີ່ຈະຂະຫຍາຍທຸລະກິດ ໂດຍໃຫ້ການສະໜັບສະໜູນການດຳລົງຊີວິດຂອງບັນດາຄູ່ຮ່ວມງານທັງໝົດ ແລະ ສະໜັບສະໜູນມໍລະດົກການຕ່ຳຜ້າຂອງປະເທດລາວທີ່ບໍ່ມີແຫ່ງໃດທຽບໄດ້ ທ່າມກາງສຽງກະທົບກັນຂອງໄມ້ຟືມຂອງຊ່າງຕ່ຳຫູກອັນໜ້າອັດສະຈັນທີ່ທໍຕຳຮັກ ແລະ ໃນໝູ່ບ້ານຕ່າງໆ ດ້ວຍປະສົບການຮ່ວມກັນລະຫວ່າງພະນັກງານ ແລະ ຄູ່ຮ່ວມງານຂອງບໍລິສັດ ລວມທັງແມ່ຍິງກວ່າ 30 ຄົນ. ■



4